City of Seattle

# ການລະງັບການໄລ່ອອກຊົ່ວຄາວ

ການໄລ່ອອກຈາກທີ່ຢູ່ອາໄສຖືກສັ່ງຫ້າມຊົ່ວຄາວຢູ່ໃນວໍຊິງຕັນ **ຈົນຮອດວັນທີ 4 ມິຖຸນາ ຫຼື ດົນກວ່ານັ້ນ ຖ້າເຫດການສຸກເສີນກາງເມືອງຍັງສືບຕໍ່**, ຕາມຄໍາສັ່ງຂອງຜູ້ປົກຄອງ Inslee ເນື່ອງຈາກ COVID-19.

## ຂ້ອຍຍັງຈໍາເປັນຕ້ອງຈ່າຍຄ່າເຊົ່າຂອງຂ້ອຍຢູ່ບໍ?

***ແມ່ນ***. ແຕ່ຖ້າທ່ານບໍ່ສາມາດຈ່າຍຄ່າເຊົ່າຂອງທ່ານໄດ້ເນື່ອງຈາກຜົນກະທົບທາງເສດຖະກິດຈາກ COVID-19 ເຈົ້າຂອງເຮືອນເຊົ່າຕ້ອງເຮັດວຽກກັບທ່ານກ່ຽວກັບແຜນການຊໍາລະອີງຕາມສະຖານະການສະເພາະຂອງທ່ານ.

## ເຈົ້າຂອງເຮືອນເຊົ່າຂອງຂ້ອຍສາມາດເພີ່ມຄ່າເຊົ່າຂອງຂ້ອຍຂຶ້ນໄດ້ບໍ?

ບໍ່, ເຈົ້າຂອງເຮືອນເຊົ່າຂອງທ່ານບໍ່ສາມາດເພີ່ມຄ່າເຊົ່າຂອງທ່ານ ຫຼື ເງິນມັດຈໍາຂອງທ່ານຂຶ້ນໄດ້ຕະຫຼອດການລະງັບຊົ່ວຄາວ.

## ຂ້ອຍສາມາດຖືກຮຽກເກັບເງິນເພີ່ມສໍາລັບການບໍ່ຈ່າຍຄ່າເຊົ່າຂອງຂ້ອຍຕາມກໍານົດເວລາໄດ້ບໍ?

ບໍ່. ບໍ່ອະນຸຍາດໃຫ້ເກັບຄ່າປັບໄໝການຈ່າຍຊ້າໃນຕະຫຼອດໄລຍະການລະງັບຊົ່ວຄາວ. ເຈົ້າຂອງເຮືອນເຊົ່າຂອງທ່ານບໍ່ສາມາດຮຽກເກັບຄ່າເຊົ່າທີ່ຄ້າງຊໍາລະໂດຍການທວງໜີ້ ຫຼື ຂູ່ວ່າຈະເຮັດແບບນັ້ນໄດ້.

## ຂ້ອຍຕ້ອງໂອ້ລົມກັບເຈົ້າຂອງເຮືອນເຊົ່າຂອງຂ້ອຍກ່ຽວກັບມັນບໍ?

ແມ່ນ! ຮັກສາການຕິດຕໍ່ສື່ສານໃຫ້ເປີດກວ້າງກັບເຈົ້າຂອງເຮືອນເຊົ່າຂອງທ່ານ. ເຈົ້າຂອງເຮືອນເຊົ່າຂອງທ່ານຈະຈໍາເປັນຕ້ອງວາງແຜນຮັບມືຜົນກະທົບຈາກການບໍ່ໄດ້ຮັບຄ່າເຊົ່າ.

## ຂ້ອຍສາມາດຖືກໄລ່ອອກໃນລະຫວ່າງການລະງັບຊົ່ວຄາວນີ້ໄດ້ບໍ?

ສະເພາະຖ້າທ່ານເປັນໄພຄຸກຄາມທີ່ໃກ້ຈະເກີດຂຶ້ນຕໍ່ສຸຂະພາບ ແລະ ຄວາມປອດໄພຂອງເພື່ອນບ້ານຂອງທ່ານ ແລະ/ຫຼື ເຈົ້າຂອງເຮືອນເຊົ່າຂອງທ່ານເທົ່ານັ້ນ.

## ຂ້ອຍໄດ້ຮັບຄວາມຊ່ວຍເຫຼືອຢູ່ໃສຖ້າຂ້ອຍໄດ້ຮັບແຈ້ງການ *ຈ່າຍ ຫຼື ຍ້າຍອອກໄປ* ພາຍໃນ 14 ມື້ ຫຼື ໃບແຈ້ງການຂັບໄລ່ອອກອື່ນໃນລະຫວ່າງການລະງັບຊົ່ວຄາວນີ້?

ຕິດຕໍ່ຫາ Renting in Seattle Helpline ທີ່ເບີ (206) 684-5700 ຫຼື ເຮັດການຮ້ອງຮຽນທາງອອນລາຍທີ່ https://cosaccela.seattle.gov (ກວດເບິ່ງຢູ່ກ້ອງ +Create New ແລະ ເລືອກ Complain). ມີການຊ່ວຍເຫຼືອດ້ານພາສາໃຫ້.

ສໍາລັບຂໍ້ມູນອັບເດດຫຼ້າສຸດ ເຂົ້າໄປທີ່ seattle.gov/rentinginseattle
ໂທຫາພວກເຮົາທີ່ເບີ 206.684.5700

## ຊັບພະຍາກອນຊ່ວຍເຫຼືອເພີ່ມເຕີມກ່ຽວກັບ COVID-19

www.seattle.gov/mayor/covid-19 ສໍາລັບລາຍຊື່ຊັບພະຍາກອນໃນຊຸມຊົນ.
2-1-1 ສໍາລັບຂໍ້ມູນກ່ຽວກັບຄວາມຊ່ວຍເຫຼືອທາງການເງິນ ແລະ ຄວາມຈໍາເປັນພື້ນຖານ.
https://esd.wa.gov/newsroom/covid-19 ສໍາລັບຂໍ້ມູນປະກັນການຫວ່າງງານ